ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ 1232 /ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 09 ກັນຍາ 2025

# ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ທີ່ນັບຖື;

ເລື່ອງ: ເພີ່ມທະວີຄວາມເຂັ້ມງວດ ຕິດຕາມ, ກວດກາການນຳເຂົ້າ ແລະ ການຈຳໜ່າຍ ສິນຄ້າປະເພດໄຂ່ໄກ່.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 2077/ອຄ ລົງວັນທີ 15 ພະຈິກ 2023.
- ອີງຕາມ ຄຳສັ່ງ ວ່າດ້ວຍການເພີ່ມທະວີການຕິດຕາມ, ກວດກາ ແລະ ສະກັດກັ້ນ ການຄ້າສິນຄ້ານອກລະບົບ ແລະ ໃຊ້ມາດຕະການຕໍ່ຜູ້ລະເມີດ ສະບັບເລກທີ 1861/ອຄ, ລົງວັນທີ 30 ກັນຍາ 2024.

ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດ ຕິດຕາມ, ກວດກາ, ການນຳເຂົ້າ ແລະ ການຈຳໜ່າຍສິນຄ້າ ໂດຍສະເພາະ ສິນຄ້າປະເພດໄຂ່ໄກ່ ໃນທຸກໆຮູບແບບ, ເພື່ອເປັນການປົກປ້ອງຜູ້ຊົມໃຊ້ ແລະ ສົ່ງເສີມການຜະລິດພາຍໃນ ຊຶ່ງໃນປັດຈຸບັນເຫັນວ່າ ຍັງມີການລັກລອບນຳເຂົ້າ ແລະ ຈຳໜ່າຍສິນຄ້າປະເພດໄຂ່ໄກ່ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ເປັນຈຳນວນຫຼວງຫຼາຍຢູ່ໃນບັນດາຫ້າງຮ້ານຂາຍຍົກ-ຂາຍຍ່ອຍ, ຈຶ່ງສົ່ງຜົນກະທົບຕໍ່ຜູ້ຜະລິດພາຍໃນ ແລະ ຫົວໜ່ວຍທຸລະກິດທີ່ເຄື່ອນໄຫວຖືກຕ້ອງ ສອດຄ່ອງກັບກົດໝາຍ ແລະ ລະບຽບການໂດຍກົງ. ສະນັ້ນ, ເພື່ອເປັນການປົກປ້ອງ ແລະ ສະກັດກັ້ນການລັກລອບນຳເຂົ້າ ແລະ ຈຳໜ່າຍສິນຄ້າປະເພດໄຂ່ໄກ່ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດຊາບ ດັ່ງນີ້:

1. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳ ແຕ່ງຕັ້ງເຈົ້າໜ້າກວດກາການຄ້າ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທີ່ເຫັນວ່າມີຄວາມຈຳເປັນ ລົງຕິດຕາມ, ກວດກາ, ການລັກລອບນຳເຂົ້າສິນຄ້າທີ່ບໍ່ຖືກຕ້ອງກັບກົດໝາຍ ແລະ ລະບຽບການ, ບັນດາຫ້າງຮ້ານຂາຍຍົກ-ຂາຍຍ່ອຍ ຕາມສິດ ແລະ ພາລະບົດບາດຂອງຕົນຢ່າງເຂັ້ມງວດ;

2. ຖ້າພົບເຫັນການນຳເຂົ້າສິນຄ້າທີ່ບໍ່ຖືກຕ້ອງຕາມລະບຽບການ, ບໍ່ໄດ້ຮັບການອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ແມ່ນໃຫ້ປະຕິບັດ ແລະ ໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມຂໍ້ຕົກລົງ ສະບັບເລກທີ 0019/ອຄ.ກຄພນ, ລົງວັນທີ 06 ມັງກອນ 2025 ຢ່າງເຂັ້ມງວດ;

3. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ, ຫຼັງຈາກນັ້ນ ໃຫ້ລາຍງານຜົນການຈັດຕັ້ງປະຕິບັດ ມາຍັງກົມການຄ້າພາຍໃນຊາບ ເປັນແຕ່ລະໄລຍະ ແລະ ໃຫ້ທັນກັບສະພາບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ສັນຕິສຸກ ພູນສະຫວັດ